ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະຜູ້ແທນສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບສະຫະພັນກຳມະບານທະນາຄານຫວຽດນາມ ຢູ່ນະຄອນດາໜັງ, ປະເທດ ສສ.ຫວຽດນາມ.




ໂດຍປະຕິບັດຕາມບົດບັນທຶກຊ່ວຍຈຳການຮ່ວມມື ລະຫວ່າງ ສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ສະຫະພັນກຳມະບານທະນາຄານຫວຽດນາມ ທີ່ໄດ້ລົງນາມກັນ ໃນປີ 2013 ແລະ ໜັງສືເຊື້ອເຊີນຂອງ ສະຫະພັນກຳມະບານທະນາຄານຫວຽດນາມ, ຄະນະຜູ້ແທນສະຫະພັນກຳມະບານ ທຫລ ນຳພາໂດຍ**ສະຫາຍ ນ. ຂັນແກ້ວ ຫຼ້າມະນີເງົາ** ກຳມະການປະຈຳພັກ, ປະທານສະຫະພັນກຳມະບານ ທຫລ ພ້ອມດ້ວຍຄະນະຈຳນວນ 11 ສະຫາຍ ໄດ້ໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກທາງລັດຖະການ ຢ່າງເປັນທາງການຮ່ວມກັບສະຫະພັນກຳມະບານທະນາຄານຫວຽດນາມ ຢູ່ນະຄອນດາໜັງ, ປະເທດ ສສ.ຫວຽດນາມ ໃນລະຫວ່າງວັນທີ 31 ຕຸລາ ຫາ 03 ພະຈິກ 2022 ຜ່ານມານີ້.

ຈຸດປະສົງຂອງການໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢ່າງເປັນທາງການຂອງຄະນະຜູ້ແທນສະຫະພັນກຳມະບານ ທຫລ ຄັ້ງນີ້, ແມ່ນຢູ່ໃນຊ່ວງໄລຍະ ທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໄດ້ພ້ອມກັນຈັດຕັ້ງສະເຫຼີມສະຫຼອງ 2 ເຫດການປະຫວັດສາດຂອງ ລາວ-ຫວຽດນາມ ຄື: **"ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ"** ຢ່າງເປັນຂະບວນຟົດຟື້ນ, ໃນໄລຍະທີ່ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກດັ່ງກ່າວ, ສະຫະພັນກຳມະບານ ທຫລ ໄດ້ເຮັດວຽກຮ່ວມກັບຄະນະຜູ້ແທນສະຫະພັນກຳມະບານທະນາຄານຫວຽດນາມ ແລະ ກຳມະບານຮາກຖານທະນາຄານການຄ້າຮຸ້ນສ່ວນການລົງທຶນ ແລະ ພັດທະນາຫວຽດນາມ (BIDV) ປະຈຳສາຂານະຄອນດາໜັງ, ໃນການພົບປະເຮັດວຽກຂອງທັງສອງຝ່າຍແມ່ນໄດ້ຮັບຟັງການລາຍງານສະພາບໂດຍສັງເຂບກ່ຽວກັບການຈັດຕັ້ງແລະການເຄື່ອນໄຫວວຽກງານກຳມະບານຂອງກັນ ໃນໄລຍະ 1 ປີຜ່ານມາ, ພ້ອມທັງແລກປ່ຽນບົດຮຽນການເຄື່ອນໄຫວຕົວຈິງໃນດ້ານຕ່າງໆຂອງທັງສອງຝ່າຍ ຢ່າງກົງໄປກົງມາ ຊຶ່ງໄດ້ດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ ແລະ ສະໜິດສະໜົມ.




ພ້ອມດຽວກັນ, **ສະຫາຍ ນ. ຂັນແກ້ວ ຫຼ້າມະນີເງົາ** ກຳມະການປະຈຳພັກ, ປະທານສະຫະພັນກຳມະບານ ທຫລ , ຕາງໜ້າໃຫ້ຄະນະບໍລິຫານງານພັກ ທຫລ ກໍ່ຄືຄະນະບໍລິຫານງານສະຫະພັນກຳມະບານ ທຫລ ໄດ້ປະດັບຫຼຽນກາກຳມະບານ ແລະ ມອບໃບຍ້ອງຍໍຂອງປະທານສູນກາງສະຫະພັນກຳມະບານລາວ ໃຫ້ກົມກອງ-ບຸກຄົນ ຂອງສະຫະພັນກຳມະບານທະນາຄານຫວຽດນາມ ທີ່ມີຜົນງານການປະກອບສ່ວນສຳຄັນເຂົ້າໃນການເຄື່ອນໄຫວວຽກງານຂອງສອງສະຫະພັນກຳມະບານ ໃນໄລຍະຜ່ານມາຄື: **ປະດັບຫຼຽນກາກຳມະບານ (ຈຳນວນ 2 ໜ່ວຍ)** ໃຫ້ສະຫະພັນກຳມະບານທະນາຄານຫວຽດນາມ; ໃຫ້**ສະຫາຍ ຫງວຽນດົງຕຽນ** (ພະນັກງານບຳນານ) ອາດີດປະທານສະຫະພັນກຳມະບານ, ທັງເປັນອາດີດຮອງຜູ້ອຳນວຍການທະນາຄານແຫ່ງລັດຫວຽດນາມ, **ມອບໃບຍ້ອງຍໍປະທານສູນກາງສະຫະພັນກຳມະບານລາວ (ຈຳນວນ 3 ສະ ຫາຍ) ສະຫາຍ ດາວມິງຕູ** ປະທານສະຫະພັນກຳມະບານ, ທັງເປັນຮອງຜູ້ອຳນວຍການທະນາຄານແຫ່ງລັດຫວຽດນາມ; **ສະຫາຍ ຫງວຽນ ວັນເຕີນ** ຮອງປະທານ, ຜູ້ປະຈຳການສະຫະພັນກຳມະບານທະນາຄານຫວຽດນາມ; **ສະຫາຍ ນ. ຫງວຽນ ແອງທື** ຮອງຫົວໜ້າຄະນະຈັດຕັ້ງສະຫະພັນກຳມະບານທະນາຄານຫວຽດນາມ.




ຮຽບຮຽງຂ່າວ: ທ ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*